ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117
PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 032/ບຊລ
ນະຄອນຫລວງວຽງຈັນ, ວັນທີ 30 JAN 2023

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ສົກປີ 2022
ບໍລິສັດ ຊີມັງລາວ ມະຫາຊົນ

ປະຊຸມເມື່ອວັນທີ 16/01/2023 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 08 ອາຄານຕະຫຼາດຫຼັກຊັບລາວບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ. ປະທານກອງປະຊຸມໂດຍທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 21 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 09 ທ່ານ ແລະ ມອບສັນທະ 10 ທ່ານ, ມີຮຸ້ນລວມກັນທັງໝົດ 35,591,200 ຮຸ້ນ ເທົ່າກັບ 89 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້ :

- ຜູ້ເຂົ້າຮ່ວມກອງປະຊຸມຢູ່ເມືອງຄຸນມິງ ສປ ຈີນ (ແບບອອນລາຍ):

1. ທ່ານ ຢາງຊຸນຢິງ ປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ, ຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕັກນິກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ;
2. ທ່ານ ຈ່າງຈິງຫວາ ຫົວໜ້າຝ່າຍການເງິນຂອງບໍລິສັດ ເຄືອຂ່າຍເຕັກໂນໂລຊີ ຊຽນຫານຢຸນນານ ຈຳກັດ

- ຜູ້ເຂົ້າຮ່ວມກອງປະຊຸມຢູ່ນະຄອນຫຼວງວຽງຈັນ ປະກອບມີ:

1. ທ່ານ ວັນທອງ ສິດທິກຸນ ຜູ້ອຳນວຍການໃຫ່ຍຂອງ ລັດວິສາຫະກິດ ພກອ, ຮອງປະທານສະພາບໍລິຫານຂອງບໍລິສັດ LCC;
2. ທ່ານ ຄຳບົນ ໄຊເລົ່າວົງ ຮອງຜູ້ອຳນວຍການໃຫ່ຍຂອງ ລັດວິສາຫະກິດ ພກອ, ກຳມະການສະພາບໍລິຫານຂອງບໍລິສັດ LCC;
3. ທ່ານ ເນັຍເຫຼີຍ ຜູ້ອຳນວຍການໃຫຍ່ຂອງບໍລິສັດ LCC;
4. ທ່ານ ວິຈິດ ສຸວັນນະລາດ ຮອງຜູ້ອຳນວຍການຂອງ ບໍລິສັດ LCC, ກຳມະການສະພາບໍລິຫານຂອງບໍລິສັດ LCC;
5. ທ່ານ ວົງວິຈິດ ແກ້ວວົງກົດ ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ LCC;
6. ທ່ານ ສຸພັກ ຖິ່ນໄຊພອນ ຜູ້ອຳນວຍການໃຫຍ່ຂອງຕະຫຼາດຫຼັກຊັບລາວ;

7. ທ່ານ ພົງສະຫວັດ ລືນນາມ ຜູ້ຊ່ວຍຄະນະອຳນວຍການ
8. ທ່ານ ທະນູສິດ ແສງມະນີພອນ ຮອງຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ;
9. ທ່ານ ນ ວັນນະພອນ ສຸນັນທາ ທຳມະວົງ ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັ
10. ທ່ານ ນ ມະທິກອນ ອິນທະວົງ ພະແນກຈົດທະບຽນ ແລະເປີດເປີດຂໍ້ມູນ,ຕລຫຊ;
11. ທ່ານ ວິໄຊ ດວງສະຫວັດ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ.

ເລຂາສະພາບໍລິຫານໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີການລົງຄະແນນສຽງ ຈາກນັ້ນທ່ານ ວັນທອງ ສິດທິກຸນ ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະ ເຊິ່ງກອງປະຊຸມໄດ້ ພິຈາລະນາ, ມີຄຳເຫັນ ແລະມີການຕົກລົງໃນແຕ່ລະວາລະດັ່ງນີ້ :

ວາລະທີ 1: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງຂາຮຸ້ນຂອງ ບໍລິສັດ ຊິມັງລາວ ມະຫາຊົນ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນໄດ້ລາຍງານ ຕໍ່ກອງປະຊຸມວ່າ :

ທາງບໍລິສັດ ຊິມັງລາວ ມະຫາຊົນ ໄດ້ສຳເລັດການໂອນຮຸ້ນຜູ້ສ້າງຕັ້ງຂອງບໍລິສັດ ຊິມັງລາວ ມະຫາຊົນ ແລ້ວ ໃນວັນທີ 28 ພະຈິກ 2022 ໂດຍໄດ້ດຳເນີນການໂອນຮຸ້ນຂອງບໍລິສັດການຮ່ວມມືເຕັກນິກ ເສດຖະກິດສາກົນຢຸນນານ ສປຈີນ ຈຳກັດ (ຕາງໜ້າໂດຍທ່ານ Liu Wei) ໃຫ້ ບໍລິສັດ ເຄືອຂ່າຍເຕັກ ໂນໂລຊີຊຽນຫານຢຸນນານ ຈຳກັດ (ຕາງໜ້າໂດຍທ່ານ Nie Lei), ລວມຈຳນວນ 14,280,000 ຮຸ້ນ (ເທົ່າກັບ 35,6964%).

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງມີຄຳ ເຫັນ ແລະຄຳຖາມດັ່ງນີ້ :

✡ ທ່ານ ໄກວັນ ກາດາວານີ Mr Kraiwal Kadavanich ຕາງໜ້າສະມາຄົມຜູ້ຖືຮຸ້ນໄທ ໄດ້ປະກອບຄຳ ເຫັນວ່າ: ເອກະສານຂອງກອງປະຊຸມຄັ້ງນີ້ບໍ່ທັນສົມບູນປານໃດ, ຄຳສັບຢູ່ໃນເອກະສານສະບັບພາສາ ອັງກິດບໍ່ສອດຄ່ອງກັບສະບັບພາສາລາວ, ສ່ວນວາລະທີ 4 ຫາ ວາລະທີ 9 ບໍ່ມີເອກະສານເປັນສະບັບພາສາ ອັງກິດເລີຍ ກ່ອນຈັດກອງປະຊຸມຄວນກຽມພ້ອມທັງພາສາລາວ ແລະ ພາສາອັງກິດ.

✡ ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ໄດ້ສະແດງຄວາມຂອບໃຈຕໍ່ການປະກອບຄຳ ເຫັນ ແລະຊີ້ແຈງວ່າ : ສຳລັບບັນຫາດັ່ງກ່າວ ຫຼັງຈາກກອງປະຊຸມສິ້ນສຸດລົງແລ້ວ ທາງບໍລິສັດຈະປັບປຸງ ແກ້ໄຂເນື້ອໃນເອກະສານໃຫ້ຄົບຖ້ວນພາຍໃນ 15 ວັນລັດຖະການ ແລ້ວຈະເປີດເຜີຍທາງເວັບໄຊຂອງ ຕະຫຼາດຫຼັກຊັບລາວ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ) ຂອງບໍລິສັດ ຊິມັງລາວ ມະຫາຊົນ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ :

ຜ່ານການປຶກສາຫາລືຂອງ ກອງປະຊຸມສະພາບໍລິຫານຂອງບໍລິສັດ ຄັ້ງວັນທີ 19 ພະຈິກ 2022 ເນື່ອງຈາກວ່າໄດ້ສຳເລັດການໂອນຮຸ້ນ ຂອງບໍລິສັດ ຊິມັງລາວ ມະຫາຊົນ ສະນັ້ນ ທ່ານ ຈ່າງລີ ຜູ້ອຳນວຍການ ຈະໄດ້ຍົກຍ້າຍໄປປະຈຳຢູ່ ບໍລິສັດ ຢຸນນານສາກົນ, ດັ່ງນັ້ນ, ຈຶ່ງສະເໜີພິຈາລະນາແຕ່ງຕັ້ງ ທ່ານ ເນ້ຍເຫຼັຍຂຶ້ນດຳລົງຕຳແໜ່ງເປັນ ຜູ້ອຳນວຍການໃໝ່ ຂອງບໍລິສັດ ຊິມັງລາວມະຫາຊົນ ແທນທ່ານ ຈ່າງລີ ຜູ້ເກົ່າ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະຄຳຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງ ການສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ຊິມັງລາວ ມະຫາຊົນ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ :

ກ. ຈຸດປະສົງການຊື້ຮຸ້ນຂອງບໍລິສັດ ເຄືອຂ່າຍເຕັກນິກຊຽນຫານຢຸນນານ ຈຳກັດ

ຜູ້ລົງທຶນໃໝ່ມີເຈດຈຳນົງຢາກຊື້ຮຸ້ນທີ່ບໍລິສັດຢຸນນານສາກົນຖືຄອງ (ຈຳນວນ 35.6964%) ແລະ ຮຸ້ນທີ່ບໍລິສັດຫຼັກຊັບລາວ - ຈີນຖືຄອງ (ຈຳນວນ 18.8676%) ແລ້ວຈະກາຍເປັນຂາຮຸ້ນໃຫຍ່ທີ່ສຸດ ຂອງບໍລິສັດ, ສ່ວນຮຸ້ນຂອງລັດວິສາຫະກິດ ພ.ກ.ອ. ຈະຮັກສາຄືເກົ່າ, ແລະຈະຫັນປ່ຽນຂະແໜງການດຳເນີນທຸລະກິດ ແລະຈະເຮັດຂະແໜງການຜະລິດຊີມັງເປັນຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ.

ຂ. ໄລຍະເວລາຂ້າມຜ່ານຂອງການໂອນຮຸ້ນ

1) ບໍລິສັດຊຽນຫານຢຸນນານ ໄດ້ເຊັນສັນຍາຊື້ຂາຍຮຸ້ນກັບບໍລິສັດຢຸນນານສາກົນ ແລະ ບໍລິສັດຫຼັກຊັບລາວ - ຈີນສຳເລັດແລ້ວ.

2) ບໍລິສັດ ຊິມັ່ງລາວ ມະຫາຊົນໄດ້ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນລະຫວ່າງບໍລິສັດຊຽນຫານຢຸນນານ ກັບ ບໍລິສັດຢຸນນານສາກົນ ແລະ ບໍລິສັດຫຼັກຊັບລາວ - ຈີນສຳເລັດແລ້ວ.
3) ບໍລິສັດຊຽນຫານຢຸນນານໄດ້ຮັບຈ້າງທີ່ປຶກສາການເງິນອິດສະຫຼະຕາມລະບຽບການສຳເລັດແລ້ວ.
4) ບໍລິສັດຊຽນຫານຢຸນນານກຳລັງປະຕິບັດຂັ້ນຕອນຊອນຊື້ຮຸ້ນນຳຂາຮຸ້ນລາຍຍ່ອຍຕາມລະບຽບ.
5) ບໍລິສັດຊຽນຫານຢຸນນານໄດ້ເປີດເຜີຍຂໍ້ມູນກ່ຽວກັບແຜນການພັດທະນາຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ 5 ປີຂ້າງໜ້າ ແລະ ຂໍ້ມູນກ່ຽວກັບຈຳນວນຮຸ້ນທີ່ຜູ້ລົງທຶນໃໝ່ໄດ້ຊື້, ລາຄາ ຂອງຮຸ້ນ ແລະ ໄລຍະເວລາ.

ຄ. ການປ່ຽນຂະແໜງການທຸລະກິດຫຼັກ ແລະ ການຕໍ່ສັນຍາສຳປະທານທີ່ດິນ

1) ການປ່ຽນຂະແໜງການທຸລະກິດຫຼັກ: ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 14 ສະບັບລົງວັນທີ 17/11/2016 ມາດຕາທີ 67 ຂໍ້ທີ 6 ໄດ້ກຳນົດວ່າ ຜູ້ລົງທຶນມີສິດສະເໜີປ່ຽນ ຫຼື ເພີ່ມຂະແໜງການທຸລະກິດ, ຫຼັງຈາກໄດ້ພິຈາລະນາ ແລະ ຮັບຮອງຜ່ານກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນແລ້ວ ບໍລິສັດ ຊິມັ່ງລາວ ມະຫາຊົນສາມາດສົ່ງໜັງສືສະເໜີໄປກະຊວງແຜນການ ແລະ ການລົງທຶນ, ສ່ວນວຽກງານດັ່ງກ່າວທາງບໍລິສັດກຳລັງປະຕິບັດຕາມຂັ້ນຕອນຢູ່.
2) ການຕໍ່ສັນຍາລົງທຶນ: ສັນຍາລົງທຶນຂອງບໍລິສັດ ຊິມັ່ງລາວ ມະຫາຊົນຈະໝົດອາຍຸໃນປີ 2028 ແຕ່ບໍລິສັດຈະຫັນປ່ຽນຂະແໜງການດຳເນີນທຸລະກິດແລະຈະເຮັດຂະແໜງການຜະລິດຊິມັ່ງເປັນຂະແໜງ ການທ່ອງທ່ຽວ ແລະ ວັດທະນະທຳ, ສະນັ້ນ, ຜູ້ລົງທຶນສາມາດສະເໜີເຊັນສັນຍາໃໝ່ນຳລັດຖະບານ ແລະ ກຳນົດອາຍຸຂອງສັນຍາໃໝ່ຕາມກົດໝາຍທີ່ກ່ຽວຂ້ອງ, ສ່ວນວຽກງານດັ່ງກ່າວ ບໍລິສັດກຳລັງປະຕິບັດຕາມຂັ້ນຕອນຢູ່.

ງ. ສິດສຳປະທານການສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່

1) ການຮັກສາສິດສຳປະທານ: ບໍລິສັດ ຊິມັ່ງລາວ ມະຫາຊົນມີຈຸດປະສົງຫັນປ່ຽນເປັນຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ ແລະຄຽງຄູ່ກັນນັ້ນ ຕ້ອງປະຕິບັດຕາມສັນຍາທີ່ເຊັນກັບລັດຖະບານ ສະບັບລົງວັນທີ 17/11/1998 ແລະ ສະບັບລົງວັນທີ 25/11/2013, ບໍລິສັດ ຊິມັ່ງລາວ ມະຫາຊົນ ສາມາດຮັກສາສິດສຳປະທານສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ຂອງໂຮງງານຊິມັ່ງວັ່ງວຽງຫຼັ່ງ 2 ແຕ່ຕ້ອງປັບປຸງເນື້ອໃນຂອງສັນຍາ ຮັກສາແຕ່ເນື້ອໃນກ່ຽວກັບສິດສຳປະທານການຂຸດຄົ້ນວັດຖຸດິບ ດ້ານເນື້ອໃນອື່ນທີ່ບໍ່ກ່ຽວຂ້ອງ ຫຼື ເຊັນສັນຍາສິດສຳປະທານການບໍ່ແຮ່ໃໝ່ ຖືວ່າເປັນການພິຈາລະນາພິເສດໃຫ້ແກ່ຜູ້ລົງທຶນທີ່ເຄີຍໄດ້ຮັບສິດສຳປະທານດັ່ງກ່າວ.

ເນື່ອງຈາກວ່າສັນຍາບໍ່ຖ່ານຫີນຄອນພຸກແມ່ນສັນຍາທີ່ບໍລິສັດເຊັນກັບລັດຖະບານຕ່າງຫາກ ບໍລິສັດ ຊິມັ່ງລາວ ມະຫາຊົນ ສາມາດຮັກສາສິດສຳປະທານຕາມສັນຍາການລົງທຶນທີ່ກ່າວເຖິງດັ່ງກ່າວ.

ແຕ່ປັດຈຸບັນນີ້, ມີປັດໄຈບໍ່ແນ່ນອນເກີດມາກະທົບເຖິງການຮັກສາບໍ່ຖ່ານຫີນ ທາງບໍລິສັດບໍ່ໄດ້ຮັກສາສິດສຳປະທານບໍ່ຖ່ານຫີນຄອນພຸກຕາມແຜນປັບປຸງທີ່ໄດ້ລະບຸໄວ້.

ສ. ການຈັດສັນພະນັກງານທີ່ອອກການ

ລັດຖະບານ ແລະ ບໍລິສັດຊຽນຫານຢຸນນານຈະປະຕິບັດຕາມຂໍ້ກຳນົດຂອງຄະນະ 1731 ວ່າງອອກ ຢ່າງເຂັ້ມງວດ.

ຊ. ຄວາມຊ່ວຍເຫລືອ ຈາກລັດຖະບານ:

1. ສະເໜີໃຫ້ລັດຖະບານຊ່ວຍສະໜັບສະໜຸນການຮັກສາໃຫ້ ບຊລ ຢູ່ໃນສະຖານະ ບໍລິສັດຈົດ ທະບຽນໃນຕະຫຼາດຫຼັກຊັບລາວ.
2. ສະເໜີໃຫ້ລັດຖະບານພິຈາລະນາອະນຸມັດຫັນປ່ຽນຈາກຂະແໜງຊີມັ້ງ ມາເປັນຂະແໜງການ ທ່ອງທ່ຽວ ເປັນກິດຈະກຳຫຼັກຂອງບໍລິສັດ.
3. ສະເໜີຂໍຕໍ່ອາຍຸສຳປະທານ (ສັນຍາລົງທຶນ) ພິຈາລະນາການກຳນົດອາຍຸສັນຍາໃໝ່ໃຫ້ໂຄງການ ໃໝ່ 50 ປີຂຶ້ນໄປ.
4. ສະເໜີຂໍໃຫ້ລັດຖະບານມີນະໂຍບາຍຫຼຸດຜ່ອນພາສີ-ອາກອນໃຫ້ແກ່ໂຄງການໃໝ່.

ສະເໜີນຳເອົາໂຄງການຮ່ວມມືຂອງບໍລິສັດຈັດເຂົ້າແຜນຮ່ວມມືລາວ - ຈີນ, ລວມທັງການຮ່ວມມື ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ ແຜນແມ່ບົດການຮ່ວມມືດ້ານເສດຖະກິດ - ເຕັກນິກ ລະຫວ່າງສອງ ລັດຖະບານ ແລະ ກົນໄກການຮ່ວມມື ລະຫວ່າງແຂວງພາກເໜືອ ກັບແຂວງຢຸນນານ ເພື່ອສ້າງເງື່ອນໄຂ ໃຫ້ໂຄງການໄດ້ຮັບການສະໜັບສະໜຸນດ້ານນະໂຍບາຍ, ທຶນຮອນ ແລະ ການອຳນວຍຄວາມສະດວກ ຈາກອົງການທີ່ກ່ຽວຂ້ອງພາກລັດຂອງສອງປະເທດ

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີ ຄຳເຫັນ ແລະຄຳຖາມຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງ ການສະສາງຊັບສິນບັດ ຂອງບໍລິສັດ ຊີມັ້ງລາວ ມະຫາຊົນ ທີ່ບໍ່ກ່ຽວກັບຂະແໜງການທ່ອງທ່ຽວ ແລະວັດທະນະທຳ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັ້ງລາວ ມະຫາຊົນໄດ້ລາຍ ງານຕໍ່ກອງປະຊຸມວ່າ :

ເນື່ອງຈາກວ່າໃນອະນາຄົດ ຂະແໜງທຸລະກິດຂອງບໍລິສັດຈະເປັນຂະແໜງການທຸລະກິດທ່ອງທ່ຽວ ວັດທະນະທຳ ແລະ ຈະບໍ່ໄດ້ດຳເນີນການຜະລິດ - ຈຳໜ່າຍຊີມັ້ງຕໍ່ໄປອີກ, ໂດຍຫຼັກການແລ້ວ ກອງປະຊຸມ ຕົກລົງເຫັນດີໃຫ້ສະສາງເຄື່ອງຈັກ - ອຸປະ ກອນ - ພາຫະນະຕ່າງໆຂອງໂຮງງານຊີມັ້ງວັງວຽງ ຫຼັງ 02 ທີ່ຈະ

ບໍ່ໄດ້ນຳໃຊ້ເຂົ້າ ໃນ ຂະແໜງການທ່ອງທ່ຽວລັດ ທະນະທຳນັ້ນອອກ, ແຕ່ທັງໝົດນັ້ນຕ້ອງປະຕິບັດໃຫ້ສອດ ຄ່ອງຕາມລະບຽບການຂອງສຳນັກງານຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະຄຳຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງ ການໂອນຊື່ເຈົ້າຂອງທີ່ດິນສຳນັກງານຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ຈາກຊື່ບຸກຄົນມາອອກຊື່ບໍລິສັດ ຊີມັງລາວ ມະຫາຊົນ ຫຼືຊື່ບໍລິສັດ ທີ່ຈະປ່ຽນຊື່ໃໝ່ຕາມການຕົກລົງຂອງສະພາບໍລິຫານ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ :

ຍ້ອນວ່າປະຈຸບັນທີ່ດິນ ພ້ອມສິ່ງປຸກສ້າງຢູ່ບ້ານໂພນພະເນົາໄດ້ອອກຊື່ ທ່ານ ວັນທອງ ສິດທິກຸນ ນັບແຕ່ມື້ທີ່ບໍລິສັດໄດ້ຊື້ເປັນຕົ້ນມາຈົນເຖິງປັດຈຸບັນ ກອງປະຊຸມສະພາບໍລິຫານໄດ້ເຫັນດີໃຫ້ດຳເນີນການປະກອບເອກະສານ ເພື່ອໂອນຊື່ເຈົ້າຂອງທີ່ດິນດັ່ງກ່າວມາເປັນຊື່ບໍລິສັດຊີມັງລາວ ມະຫາຊົນ ຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະຄຳຖາມຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ການຮື້ຖອນ ແລະ ປຸກສ້າງສຳນັກງານຂອງບໍລິສັດ ຊີມັງລາວ ມະຫາຊົນ ຄືນໃໝ່ກ່ອນເດືອນພຶດສະພາ ປີ 2023.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ :

ສຳນັກງານບໍລິສັດຕັ້ງຢູ່ບ້ານໂພນພະເນົ້າ ໄດ້ຖືກກໍ່ສ້າງ - ສ້ອມແປງ ແລະ ນຳໃຊ້ມາໄດ້ຫຼາຍປີ ມີສະພາບເກົ່າແກ່ຊຸດໂຊມ, ໂຄງສ້າງບໍ່ສາມາດຮອງຮັບການພັດທະ ນາຂອງ ບໍລິສັດ ຊີມັງລາວ ມະຫາຊົນ ໃນອະນາຄົດໄດ້, ພ້ອມກັນນັ້ນ ກໍ່ມີບໍລິສັດກໍ່ສ້າງທີ່ສົນໃຈຈະມາລົງທຶນກໍ່ສ້າງໃຫ້ກ່ອນ ຫຼັງຈາກບໍລິສັດ ຊີມັງລາວ ມະຫາຊົນ ມີທຶນຮອນພຽງພໍແລ້ວ ຈຶ່ງຊຳລະຄືນໃຫ້ບໍລິສັດຜູ້ຮັບເໝົາກໍ່ສ້າງ.

ກອງປະຊຸມສະພາບໍລິຫານໄດ້ເຫັນດີ ພິຈາລະນາໃຫ້ຮື້ຖອນ ແຕ່ຄະນະອຳນວຍການ ບໍລິສັດ ຊີມັງລາວ ມະຫາຊົນ ຕ້ອງຮັບ ປະກັນໃຫ້ມີສຳນັກງານ - ຫ້ອງການ ເພື່ອເຮັດວຽກໃນໄລຍະຊົ່ວຄາວ, ກ່ອນຈະດຳເນີນການກໍ່ສ້າງ ຄະນະອຳນວຍການ ບໍລິສັດ ຊີມັງລາວ ມະຫາຊົນ ຕ້ອງສະເໜີໃຫ້ຂາຮຸ້ນໃຫຍ່ ມີສ່ວນຮ່ວມໃນການກວດກາ - ຕິດຕາມ, ການອອກແບບ, ການປະມູນ ແລະ ການຮັບເໝົາກໍ່ສ້າງ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີ ຄຳເຫັນ ແລະຄຳຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງຂະແໜງທຸລະກິດ ແລະ ປ່ຽນຊື່ ບໍລິສັດ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນໄດ້ລາຍງານຕໍ່ ກອງປະຊຸມວ່າ :

ກອງປະຊຸມສະພາບໍລິຫານເຫັນດີໃຫ້ດຳເນີນການປ່ຽນຂະແໜງທຸລະກິດ ຊຶ່ງເລີ່ມຕົ້ນຈາກການສະເໜີ ຂໍຢຸດຕິກິດຈະການໂຮງງານຊີມັງວັງວຽງ ຫຼັງທີ 02 ຢ່າງຖາວອນ, ສະເໜີຕໍ່ພາກສ່ວນກ່ຽວຂ້ອງ ເພື່ອ ສ້າງສັນຍາໃນຂະແໜງການທຸລະກິດທ່ອງທ່ຽວ ແລະ ວັດທະນະທຳ ໂດຍປະຕິບັດຕາມແຜນປັບປຸງຟື້ນ ຟູທຸລະກິດຂອງ ບໍລິສັດ ຊີມັງລາວ ມະຫາຊົນ (1731) ແລະ ຂັ້ນຕອນຂອງລະບຽບການ ແລະ ກົດ ໝາຍ.

ສ່ວນຊື່ໃໝ່ຂອງບໍລິສັດ ກອງປະຊຸມໄດ້ສະເໜີ 02 ຊື່ເປັນທາງເລືອກ ຄື :

1. ກຸ່ມບໍລິສັດທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
2. ບໍລິສັດ ອຸດສາຫະກຳ ການທ່ອງທ່ຽວລາວ ມະຫາຊົນ

ສອງຊື່ໃໝ່ນີ້ ຈະໄດ້ພ້ອມກັນຂໍນຳໄປປຶກສາກັບຄະນະຊີ້ນຳ 1731 ຕື່ມຈຶ່ງຕົກລົງ ເລືອກເອົາ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງມີຄຳ ເຫັນ ແລະຄຳຖາມດັ່ງນີ້ :

✡ ທ່ານ ໄກວັນ ກາດາວານີ Mr Kraiwal Kadavanich ຕາງໜ້າສະມາຄົມຜູ້ຖືຮຸ້ນໄທ ໄດ້ປະກອບຄຳເຫັນວ່າ:

- ສຳລັບຊື່ໃໝ່ຂອງບໍລິສັດລຳດັບທີໜຶ່ງ ໃສ່ຊື່ວ່າ ກຸ່ມບໍລິສັດທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຄວນຕັດ ກຸ່ມ ອອກ ຫຼື ເອົາ ກຸ່ມ ຢູ່ທາງຫຼັງບໍລິສັດ.

✡ ທ່ານ ວັນທອງ ສົດທິກຸນ ຮອງປະທານສະພາບໍລິຫານໄດ້ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະຊີ້ແຈງວ່າ : ທາງບໍລິສັດຈະຮັບເອົາຄຳເຫັນດັ່ງກ່າວເພື່ອພິຈາລະນາຕື່ມອີກ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ການສະເໜີຕໍ່ຂັ້ນເທິງ ເພື່ອເລືອກເອົາສະຖານທີ່ ແລະ ອາຄານໂຮງງານ ຊິມັງອ້ຶງວຽງ ຫຼັງ 1 ເຂົ້າຮ່ວມກັບໂຄງການທ່ອງທ່ຽວ ແລະ ວັດທະນະທຳຂອງບໍລິສັດ ຊິມັງລາວ ມະຫາຊົນ.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ : ກອງປະຊຸມສະພາບໍລິຫານເຫັນດີວ່າ ຈະໄດ້ນຳສະເໜີຕໍ່ກະຊວງປ້ອງກັນປະເທດ ກໍ່ຄືລັດຖະບານ ຍ້ອນວ່າໂຮງງານຊິມັງອ້ຶງວຽງຫຼັງທີ 01 ທີ່ຂຶ້ນກັບລັດວິສາຫະກິດ ພ.ກ.ອ ມີສ່ວນພົວພັນກັບການຖືຮຸ້ນຢູ່ໃນບໍລິສັດ ຊິມັງລາວອ້ຶງວຽງ ຈຳກັດ (ໂຮງງານຊິມັງອ້ຶງວຽງ ຫຼັງທີ 03) ຕາມທີ່ລັດວິສາຫະກິດ ພ.ກ.ອ ແລະ ບໍລິສັດ ຢົງຟ້າ ສ.ປ.ຈີນ ໄດ້ເຊັນສັນຍາລົງທຶນກັບລັດຖະບານ ສ.ປ.ປ.ລາວ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະຄຳຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງ ການສ້າງຂໍ້ກຳນົດ-ກົດລະບຽບ ແລະ ໂຄງຮ່າງ ການຈັດຕັ້ງຂອງບໍລິສັດ ຊິມັງລາວ ມະຫາຊົນຄົນໃໝ່.

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນໄດ້ລາຍງານຕໍ່ກອງປະຊຸມວ່າ : ກອງປະຊຸມສະພາບໍລິຫານເຫັນດີໃຫ້ຄະນະອຳນວຍການ ບໍລິສັດ ຊິມັງລາວ ມະ

ຫາຊິນ ປັບປຸງ ແລະ ສ້າງໂຄງຮ່າງການຈັດຕັ້ງ, ຂໍ້ກຳນົດ ກົດລະບຽບໃນການຄຸ້ມຄອງ ບໍລິຫານ, ລະບຽບ ການຄຸ້ມຄອງທາງດ້ານການເງິນ-ການບັນຊີ ແລະ ນິຕິກຳທີ່ກ່ຽວຂ້ອງຂອງບໍລິສັດ ຊີມັ່ງລາວ ມະຫາຊົນ ຄືນໃໝ່ທັງໝົດ ເພື່ອຮອງຮັບກັບການພັດທະນາບໍລິສັດ ຊີມັ່ງລາວ ມະຫາຊົນ ໃນອະນາຄົດໃຫ້ສອດຄ່ອງ ກັບລະບຽບການ ແລະ ກົດໝາຍຂອງ ສ.ປ.ປ.ລາວ, ອັນຮີບດ່ວນ ແມ່ນຕົກລົງເຫັນດີໃຫ້ກະກຽມ ແລະ ຕັ້ງລະບົບບັນຊີ - ການເງິນໃໝ່ ນັບແຕ່ວັນທີ 01/01/2023 ເປັນຕົ້ນໄປ.

ຈາກນັ້ນປະທານກອງປະຊຸມໄດ້ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີ ຄຳເຫັນ ແລະຄຳຖາມໃດຈາກກອງປະຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,591,200 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຜ່ານການລາຍງານໃນກອງປະຊຸມສາມັນຜູ້ຖືຮຸ້ນມີທັງໝົດ 9 ວາລະ ແມ່ນຜ່ານໄປດ້ວຍຜົນສຳ ເລັດອັນຈົບງາມ.

ຈາກນັ້ນ, ທ່ານ ວັນທອງ ສິດທິກຸນ ປະທານກອງປະຊຸມໄດ້ກ່າວ ຄຳຂອບໃຈສຳລັບຄຳເຫັນຕໍ່ກັບ ບັນຫາຕ່າງໆ ຂອງບໍລິສັດ ຊີມັ່ງລາວ ມະຫາຊົນ ຈະຮັບເອົາຄຳຄິດເຫັນຂອງທ່ານເພື່ອໄປຄົ້ນຄວ້າປັບປຸງໃຫ້ ດີຂຶ້ນ ຕາມຄວາມເໝາະສົມ ແລະກ່າວຄຳອວຍພອນໄຊ່ບັນດາ ຜູ້ຖືຮຸ້ນ, ຜູ້ຕາງໜ້າຜູ້ຖືຮຸ້ນ, ກຳມະການ ສະພາບໍລິຫານ ແລະ ແຂກທີ່ມີກຽດທຸກທ່ານ ທີ່ໄດ້ເຂົ້າຮ່ວມກອງປະຊຸມ ພ້ອມກ່າວປິດກອງປະຊຸມໃນ ເວລາ 16:00 ໂມງຂອງວັນດຽວກັນ.

ປະທານກອງປະຊຸມ **ຜູ້ບັນທຶກ**

ວັນທອງ ສິດທິກຸນ

ເຊັ້ຍລ່ຽງອູ

ໝາຍເຫດ : ປຶດບັນທຶກສະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.